ADB

ASIAN DEVELOPMENT BANK
Lao PDR Resident Mission
Corner of Lanexang Avenue and Samsenthai
Road, Vientiane, Lao PDR
Tel: +856 21 250444
Fax: +856 21 250333

www.adb.org

NEWS RELEASE

# ເອດີບີ, ສປປ ລາວ ລົງນາມສັນຍາປັບປຸງທ່ອງທ່ຽວ ແລະ ການບໍລິການໃນຕົວເມືອງ

**ນະຄອນຫຼວງວຽງຈັນ, ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (16 ຕຸລາ 2018)** — ມື້ນີ້, ທະນາຄານພັດທະນາອາຊີ (ເອດີບີ) ແລະ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສປປ ລາວ) ໄດ້ຮ່ວມກັນລົງນາມໃນສັນຍາທຶນຊ່ວຍເຫຼືອລ້າມູນຄ່າ 125,5 ລ້ານ ໂດລາສະຫະລັດ ສໍາລັບ 3 ໂຄງການ ໃຫ້ແກ່ຂະແໜງການທ່ອງທ່ຽວ ແລະ ຂະແໜງພັດທະນາຕົວເມືອງ.

ທ່ານ ນາງ ທິບພະກອນ ຈັນທະວົງສາ, ຮອງລັດຖະມົນຕີກະຊວງການເງິນ ແລະ ທ່ານ ຢະຊູຊິ ເນກິຊິ ຜູ້ຕາງໜ້າ ເອດີບີ ປະຈໍາສໍານັກງານ ສປປ ລາວ ໄດ້ຮ່ວມລົງນາມໃນສັນຍາທຶນຊ່ວຍເຫຼືອລ້າດັ່ງກ່າວ ທີ່ນະຄອນຫຼວງວຽງຈັນ. ເຂົ້າຮ່ວມເປັນສັກຂີພະຍານໃນພິທີເຊັນສັນຍາ ມີບັນດາເຈົ້າໜ້າທີ່ຂັ້ນສູງຈາກກະຊວງການເງິນ, ກະຊວງແຜນການແລະ ການລົງທຶນ, ກະຊວງໂຍທາທິການແລະຂົນສົ່ງ ແລະ ກະຊວງຖະແຫຼງຂ່າວ ວັດທະນາທໍາ ແລະ ທ່ອງທ່ຽວ ພ້ອມດ້ວຍບັນດາແຂກທີ່ຖືກເຊີນຈາກບັນດາກະຊວງອ້ອມຂ້າງ.

ທ່ານ ເນກິຊິ ກ່າວວ່າ "ຕົວເມືອງແລະເມືອງທີ່ສວຍງາມແລະໜ້າຢູ່ ມີບົດບາດສໍາຄັນປະກອບສ່ວນເຂົ້າໃນການພັດທະນາອຸດສະຫະກໍາແລະການບໍລິການ, ໂດຍສະເພາະ ເພື່ອສົ່ງເສີມໃຫ້ມີການຜະລິດໃນໂຮງຈັກໂຮງງານ, ການຜະລິດກະສິກໍາເປັນສິນຄ້າ ແລະ ການທ່ອງທ່ຽວ" ທ່ານກ່າວຕື່ມອີກວ່າ "ໂຄງການທຶນຊ່ວຍເຫຼືອລ້າທັງສາມໂຄງການນີ້ ໄດ້ຢືນຢັນເຖິງຄໍາໝັ້ນສັນຍາຊ່ວຍເຫຼືອຂອງ ເອດີບີ ທີ່ມີຕໍ່ ສປປ ລາວ ເພື່ອຈັດການກັບການປັບປຸງຕົວເມືອງ ປັບປຸງວຽກງານທ່ອງທ່ຽວ ພ້ອມທັງດຶງດູດການລົງທຶນໃຫ້ສາມາດຍືນຍົງ ເພື່ອຈະສ້າງວຽກເຮັດງານທໍາໃນຫຼາຍຂະແໜງການເສດຖະກິດໃຫ້ເພີ່ມຂຶ້ນ ຊຶ່ງຈະຊ່ວຍເຮັດໃຫ້ປະເທດ ສາມາດຫຼຸດພົ້ນອອກຈາກສະຖານະປະເທດດ້ອຍພັດທະນາພາຍໃນປີ 2020".

ທຶນຊ່ວຍເຫຼືອລ້າມູນຄ່າ 47 ລ້ານ ໂດລາສະຫະລັດ ສາລັບໂຄງການປັບປຸງໂຄງລ່າງພື້ນຖານເພື່ອສົ່ງເສີມການທ່ອງທ່ຽວໃນອະນຸພາກພື້ນແມ່ນໍ້າຂອງໄລຍະ 2 ຊຶ່ງໄດ້ຮັບອະນຸມັດຈາກສະພາບໍລິຫານຂອງ ເອດີບີ ໃນເດືອນ ສິງຫາ 2018 ຈະຊ່ວຍສະໜັບສະໜູນຄວາມພະຍາຍາມຂອງ ກະຊວງຖະແຫຼງຂ່າວ ວັດທະນະທໍາ ແລະ ທ່ອງທ່ຽວ ເພື່ອປັບປຸງບູລະນະເສັ້ນທາງທີ່ເຂົ້າເຖິງແຫຼ່ງທ່ອງທ່ຽວ, ປັບປຸງສະພາບແວດລ້ອມໃນຕົວເມືອງແລະການບໍລິການໃຕ່າງໆທີ່ຕິດພັນກັບທ່ອງທ່ຽວ ພ້ອມທັງເພີ່ມທະວີຄຸ້ມຄອງວຽກງານທ່ອງທ່ຽວໃຫ້ມີຄວາມຍືນຍົງ ໃນແຂວງຫຼວງພະບາງ ແຂວງວຽງຈັນ ແລະ ແຂວງຈໍາປາສັກ ຊຶ່ງເປັນແຂວງເປົ້າໝາຍຂອງໂຄງການ. ການປັບປຸງເສັ້ນທາງທີ່ແທດເໝາະກັບສະພາບອາກາດ ແລະ ການປັບປຸງໂຄງລ່າງພື້ນຖານໃນເຂດຕົວເມືອງ ພ້ອມທັງການສະໜັບສະໜູນສົ່ງເສີມການສ້າງຄວາມອາດສາມາດໃນວຽກງານທ່ອງທ່ຽວຂອງໂຄງການ ໄດ້ຮັບການອອກແບບເພື່ອສົ່ງເສີມການ ທ່ອງທ່ຽວໃຫ້ມີການພັດທະນາ ແລະ ລົງເລິກໃນການຮ່ວມມືເຊື່ອມໂຍງກັບບັນດາປະເທດເພື່ອບ້ານ ກໍ່ຄືກັບບັນດາປະເທດສະມາຊິກອາຊຽນ.

ຂໍ້ມູນເພີ່ມເຕີມຕິດຕໍ່

ສຸພາວັນ ພົນມະນີ
ໂທ: + 856 21 250444 ext. 107
ມືຖື. +856 20 55617237
E-mail: sphonmany@adb.org

Connect with us on social media:

AsianDevBank
@ADB_HQ
@ADB_HQ
Asian-Development-Bank

ທຶນຊ່ວຍເຫຼືອລ້າມູນຄ່າ 48 ລ້ານໂດລາສະຫະລັດ ສຳລັບ ໂຄງການພັດທະນາຕົວເມືອງຕາມແລວທາງອະນຸພາກພື້ນແມ່ນ້ຳຂອງໄລຍະ 4 ຊຶ່ງໄດ້ຮັບອະນຸມັດທຶນຈາກເອດີບີໃນ ເດືອນ ສິງຫາ 2018 ຈະໄດ້ຮັບການຈັດຕັ້ງປະຕິບັດໂດຍກະຊວງໂຍທາທິການແລະຂົນສົ່ງ ເພື່ອປັບປຸງວຽກງານການບໍລິການຕົວເມືອງຕ່າງໆ ໃນນັ້ນລວມທັງການກໍ່ສ້າງໂຮງງານບຳບັດນ້ຳເປື້ອນ ແລະ ລະບົບລະບາຍນ້ຳເປື້ອນ, ການບໍລິຫານຈັດການກັບສິ່ງເສດເຫຼືອ, ແລະການກໍ່ສ້າງຕາຝັ່ງກັນເຈື່ອນເພື່ອປ້ອງກັນນ້ຳຖ້ວມໃນສອງຕົວເມືອງທີ່ຢູ່ຕາມແລວເສດຖະກິດເຊັ່ນ: ປາກຊັນ ແລະ ທ່າແຂກ. ໂຄງການດັ່ງກ່າວຍັງຈະໄດ້ສະໜັບສະໜູນສ້າງຄວາມພ້ອມໃຫ້ແກ່ ການສ້າງແຜນແມ່ບົດພັດທະນາຕົວເມືອງໂດຍອີງໃສ່ເງື່ອນໄຂທີ່ຕິດພັນກັບ ມາດຖານການປັບຕົວເຂົ້າກັບສະພາບອາກາດ ແລະ ວຽກງານສົ່ງເສີມບົດບາດຍິງ-ຊາຍ ເພື່ອສະໜັບສະໜູນການເຕີບໂຕແລະການເຊື່ອມຈອດກັບພາກພື້ນ.

ທຶນຊ່ວຍເຫຼືອລ້າມູນຄ່າ 30 ລ້ານໂດລາສະຫະລັດ ສຳລັບໂຄງການທີ່ສາມ ແມ່ນການສະໜອງທຶນເພີ່ມໃຫ້ແກ່ໂຄງການພັດທະນານ້ຳປະປາແລະສຸຂະພິບານໂດຍການສະໜັບສະໜູນຈາກ ເອດີບີ ທີ່ພວມດຳເນີນຢູ່ປະຈຸບັນ ຊຶ່ງໄດ້ຮັບການຈັດຕັ້ງປະຕິບັດໂດຍກະຊວງໂຍທາທິການແລະຂົນສົ່ງ. ທຶນມູນຄ່າເພີ່ມດັ່ງກ່າວ ຈະໄດ້ນຳໃຊ້ເຂົ້າໃນການຂະ ຫຍາຍການບໍລິການນ້ຳປະປາທີ່ປອດໄພແລະເຊື່ອຖືໄດ້ ແລະ ການບໍລິການສຸຂາພິບານໃນເຂດ 6 ຕົວເມືອງໃນແຂວງ ອັດຕະປື ເຊກອງ ຫົວພັນ ແລະ ຫຼວງພະບາງ ພ້ອມທັງປັບປຸງປະສິດທິພາບ ຂອງການດຳເນີນງານແລະການເງິນຂອງລັດວິສະຫະກິດນ້ຳປະປາຂອງເມືອງໃນບັນດາແຂວງເປົ້າໝາຍດັ່ງກ່າວ.

ເອດີບີ ມຸ່ງໝັ້ນທີ່ຈະເຮັດໃຫ້ ອາຊີ ແລະ ປາຊີຟິກ ເປັນພາກພື້ນທີ່ມີຄວາມວັດທະນາຖາວອນ, ສາມາດຮັບມືກັບສະພາບວິກິດ, ມີການພັດທະນາຢ່າງທົ່ວເຖິງ ແລະ ຍືນຍົງ ພ້ອມດຽວກັນກໍ່ສືບຕໍ່ພະຍາຍາມລົບລ້າງຄວາມທຸກຍາກ. ສ້າງຕັ້ງຂຶ້ນໃນປີ 1966, ເອດີບີ ມີສະມາຊິກທັງໝົດ 67 ປະເທດ ໃນນັ້ນມີ 48 ປະເທດທີ່ມາຈາກພາກພື້ນອາຊີແລະປາຊີຟິກ. ໃນປີ 2017, ການປະຕິບັດງານຂອງ ເອດີບີ ບັນລຸໄດ້ມູນຄ່າທັງໝົດ 32,2 ຕື້ໂດລະສະຫະລັດ ໃນນັ້ນລວມທັງ ການສະໜອງທຶນຮ່ວມສົມທົບຈາກພາກສ່ວນອື່ນມູນຄ່າ 11,9 ຕື້ໂດລາສະຫະລັດ.